ວິທີການປູກໝາກຖົ່ວດິນ

ໂດຍ: ພູທອນ ສີມມະວັນ, ສູນຊໍ້ມູນຂ່າວສານ

ຖົ່ວດິນເປັນພືດນໍ້າມັນທີ່ມີອາຍຸສັ້ນ ໃຊ້ປະໂຫຍດໃນຮູບແມັດ ແລະ ເມັດແຫ້ງພື້ນທີ່ປູກສວນໃຫ່ຍ ຢູ່ບໍລິເວນພາກເໜືອ, ພາກກາງ ແລະ ພາກໃຕ້.

I. ສະພາບເວດລ້ອມທີ່ເໝາະສົມ

ດິນທີ່ເໝາະສົມສໍາລັບການປູກຖົ່ວດິນ ຄວນເປັນດິນໜ້າເລີກ , ລະບາຍນໍ້າໄດ້ດີ, ບໍ່ມີນໍ້າຂັງໜ້າດິນບໍ່ຄວນແໜ້ນ ຫຼື ແຂງ ເພາະເວລາເກັບກ່ຽວ ຈະເຮັດໃຫ້ຜັກຂາດ ແລະ ຄ້າງຢູ່ໃນດິນ. ອຸນຫະພູມສະເລ່ຍສໍາລັບການເຕີບໂຕແມ່ນ ປະມານ 30 ອົງສາ ຖ້າອຸນຫະພູມຕໍ່າກ່ວານີ້ຖົ່ວດິນຈະງອກຊ້າກ່ວາປົກກະຕິ ການຂາດນໍ້າໃນໄລຍະທີ່ຖົ່ວດິນ່ລະຫວ່າງການແຕກຫໍ່ ແລະ ສ້າງຝັກ ຈະມີຜົນກະທົບຕໍ່ຜົນຜະລິດຫຼາຍທີ່ສຸດ.

1. ການກະກຽມດິນ

ຄວນໄຖດິນປູກເພື່ອກໍາຈັດຫຍ້າ ແລະ ເຮັດໃຫ້ດິນຜຸ່ຍເໝາະສົມກັບການງອກ ໂດຍໄຖດິນໃຫ້ ເລີກ ປະມານ 10 ຫາ 20 cm, ທັບ ແລະ ພວນດິນໃຫ້ລະອຽດ. ການປູກຖົ່ວດິນໃນລະດູແລ້ງ ໂດຍ ໃຊ້ນໍ້າຊົນລະປະທານ ຄວນຍົກຮ່ອງປູກ ເພື່ອສະດວກໃນການໃຫ້ນໍ້າ, ຄວາມກ້ວາງຂອງສັນຮ່ອງ ແມ່ນຂຶ້ນກັນເນື້ອດິນຖ້າເນື້ອດິນແໜ້ນຄວນໃຊ້ຮ່ອງແຄບສັນຮ່ອງກ້ວາງປະມານ60–90 cm. ປູກຖົ່ວດີ ໄດ້ສອງແຖວ ຖ້າວ່າດິນລະບາຍນໍ້າໄດ້ດີ ອາດຈະຂະຫຍາຍຂະໜາດຮ່ອງໃຫ້ກ້ວາງຂຶ້ນໄດ້ເຖິງ 1.5m. ການປູກຫຼັງເກັບກ່ຽວເຂົ້ານາ ໂດຍອາໄສຄວາມຊຸ່ມໃນດິນ ແລະ ບໍ່ມີການໃຫ້ນໍ້ານັ້ນ ມີເງື່ອນໄຂຄື: ຕ້ອງມີລະບົບນໍ້າໃຕ້ດິນຕື້ນ ແລະ ມີປະລິມານນໍ້າພຽງພໍຕໍ່ກັບການຈະເລີນເຕີບໂຕຕະລອດຫວອາຍຸ. ການກຽມດິນຈະຕ້ອງເຮັດຫຼາຍຄັ້ງເພື່ອໃຫ້ໜ້າດິນລະອຽດ ເພື່ອຫຼຸດຜ່ອນການລະເຫີຍນໍ້າຈາກດິນ ແລະ ເໝາະສົມແກ່ການແຕກຫໍ່ຂອງຖົ່ວດິນ.

2. ການກຽມເມັດພັນ

ເມັດພັນທີ່ໃຊ້ຄວນມີຄວາມສົມບູນປະມານ 70%, ແກະເມັດ ແລະ ປູກພາຍໃນ 1 ເດືອນ. ຄວນແຊ່ນໍ້າກ່ອນປູກ 4-5 ຊົ່ວໂມງ ໃຫ້ແກ່ນແຕກຫໍ່ກ່ອນງອກກ່ອນຈຶ່ງໃຊ້ປູກຈະຊ່ວຍໃຫ້ເມັດງອກໄວ ແລະ ສະໜໍ່າສະເໝີດີກ່ວາເມັດທີ່ບໍ່ໄດ້ແຊ່ນໍ້າກ່ອນ. ການປູກແບບນີ້ໃຊ້ເມັດຫຼາຍຄວບຄຸມເມັດດ້ວຍສານປ້ອງກັນເຊື້ອລາ ແມນໂຄແຊບ (ໄດເທນ M 45) ອັດຕາ 3 g/ເມັດ 1kg ຫຼື ໂບໂນມິນ (ເບນເລດ) ປະສົມຄາບອກຊິນ (ໄວຕາແວັດ) ອັດຕາ 3 -4g/ເມັດ 1kg ຫຼື ລິໂດມິນ MZ 72 ອັດຕາ 3 g/ເມັດ 1 kg. ການປະສົມເມັດບໍ່ຄວນໃຊ້ສານຊະນິດດຽວ ຕິດຕໍ່ກັນຫຼາຍລະດູການ ເພາະວ່າ ເຊື້ອລາຈະລຶ້ງກັບຢາໄດ້. ຕາມປົກກະຕິ ອັດຕາເມັດພັນທີ່ແຕກງອກແລ້ວໃຊ້ປູກປະມານ 15 ຫາ 20 kg/ພື້ນທີ່ 1,600 ມ2.

3. ລະດູປູກ

ຕົ້ນລະດູຝົນ: ປະມານເດືອນເມສາ ຫາ ເດືອນພຶດສະພາ ເກັບກ່ຽວ ປະມານເດືອນກໍລະກົດ ຫາເດືອນສິງຫາ.

ປາຍລະດູຝົນ: ປູກຕັ້ງແຕເດືອນກໍລະກົດ ຫາ ເດືອນສິງຫາ ເກັບກ່ຽວປະມານ ເດືອນຕຸລາ ຫາ ເດືອນພະຈິກ.

ລະດູແລ້ງ: ປູກໂດຍອາໄສນ້ຳຊົນລະປະທານ ເລີ່ມແຕ່ເດືອນ ຫາ ຕົ້ນເດືອນມັງກອນ ເກັບກ່ຽວໃນເດືອນເມສາ ຫາ ເດືອນພຶດສະພາ. ປູດໂດຍອາໄສຄວາມຊຸ່ມໃນດິນ ປູກໃນເດືອນພະຈິກ ຫາ ເດືອນທັນວາ ເກັບກ່ຽວໃນເດືອນກຸມພາ ຫາ ເດືອນເມສາ

***4.* ການປູກ**

ເພື່ອຢາກໃຫ້ເມັດງອກງາມ ຢ່າງສະໝ່ຳສະເໝີ ຄວນຝັ“ເມັດເລິກປະມານ 2 cm ການປູກໄລຍະແຖວຫ່າງກັນ ປະມານ 30 cm ຕົ້ນຖົ່ວຈະຄວບຄຸມພື້ນທີ່ໄດ້ໄວ ແລະ ແຂ່ງຂັນກັບວັດສະພືດໄດ້ດີ. ກຳຈັດວັດສະພືດເທື່ອດຽວກ່ຳພໍ ຫາກມີວັດສະພືດຫຼາຍ ຈ້ອງກຳຈັກວັດສະພືດສອງຄັ້ງເຊິ່ງເຮັດໄດ້ບໍ່ສະດວກຄວນປູກໄລຍະແຖວຫ່າງຄື: 40-50cm ຈະຊ່ວຍໃຫ້ກຳຈັດວັດສະພືດສະດວກຂຶ້ນ ໄລຍະຫ່າງລະຫວ່າງຂຸມ 20 cm ຈຳນວນ 2-3 ຕົ້ນ/ຂຸມ

5. ການກຳຈັດວັດສະພືດ

ການກຳຈັດວັດສະພືດດ້ວຍແຮງງານຄົນໂດຍໃຊ້ແວກເສຍ ຫຍ້າຄວນ ເຮັດ ໃນເວລາວັດສະພືດຍັງນ້ອຍຢູ່ ໃນຊ່ວງໄລຍະ 15-20 ມື້. ຫຼັງຈາກນັ້ນ ຖ້າມີ ວັດສະພືດງອກຂຶ້ນມາອີກ ຄວນກຳຈັດວັດສະພືດອີກຄັ້ງໜຶ່ງ ໃນຊ່ວງ 30 – 45 ມື້ ໃນໄລຍະນີ້ຕ້ອງປະຕິບັດຢ່າງລະມັດລະວັງ ບໍ່ໃຫ້ກະທົບກະເທືອນຕໍ່ການຢັ່ງຮາກ. ສຳລັບການໃຊ້ສານເຄມີ ອາດຈະໃຊ້ສານ ຟູອາຊີຟອບ - ພາລາ - ບິວທີນ, ຄຣີໂທດີມ, ອິມາເຊວທາພຣໍ ສີດພົ່ນຫຼັງຖົ່ວດິນ ແລະ ວັດສະພືດງອກແລ້ວ ໂດຍສີດພົ່ນເວລາທີ່ວັດສະພືດມີໃບຈິງ 2-6 ໃບ ແລະ ບໍ່ຄວນສີດພົ່ນເວລາຖົ່ວດິນມີໃບຈິງເກີນ 3 ໃບ.

6. **ການໃສ່ປ๋ຸຍ:** ຖ້າເປັນດິນກົດ pH ຕ່ຳກ່ວາ 4.5 ຄວນມີການໃສ່ປ๋ຸຍເພື່ອປັບສະພາບດິນກ່ອນໂດຍທົ່ວໄປ ດິນຊາຍໃຊ້ປູນຂາວອັດຕາ 100 – 105 kg/1,600 m2 ແລະ 200 -500kg/1,600 m2 ໂດຍໃສ່ກ່ອນປູກ 1 ເຖິງ 2 ອາທິດ ແລ້ວເອົາດິນຖົມ. ປູນຂາວນອກຈາກ ຈະຊ່ວຍປັບສະພາບຄວາມເປັນກົດເປັນດ່າງຂອງດິນແລ້ວ ຍັງໃຫ້ທາດແຄນຊຽມກ່ຳໄດ້ ໂດຍໃຊ້ອັດຕາ 50 - 100kg/1,600 m2 ໂດຍໃສ່ຂ້າແຖວປູກໃນໄລຍະທີ່ຖົ່ວ ຢັ່ງຮາກ (50 – 55 ມື້ ຫຼັງອອກ)

7. ການໃສ່ປ๋ຸຍເຄມີທີ່ພິຈາລະນາຈາກຊະນິດດິນດັ່ງນີ້:

- ດິນໜຽວ ຫຼື ດິນຜຸ່ຍໜຽວ ໃຊ້ສູດ 0-6-0 ຫຼື 3-9-0
- ດິນຜຸ່ຍ ຫຼື ດິນຜຸ່ຍປົນຊາຍໃຊ້ສູດ 3-6-3 ຫຼື 3-9-6 ຖ້າມີຂາຍຕາມຕະຫຼາດກ່ຳຄວນ ໃຊ້ສູດ 12-24-12 ອັດຕາ 15 kg/ໄລ່.

8. ການປ້ອງກັນ ແລະ ກຳຈັດເຊື້ອໂລກ

ເຊື້ອໂລກທີ່ສຳຄັນ ແລະ ທຳລາຍຜົນຜະລິດຂອງຖົ່ວດິນມີ ດັ່ງນີ້:

- ເມັດເນົ່າ ແລະ ຕົ້ນເນົ່າ ຄວນໃຊ້ແຄບຕາໂຟ (ໄດໂຟລາແທນ) ຫຼື ໄທແລມ (ເທີຊານ) 2ບ່ວງຊາປະສົມ ເມັດ 1 kg.

- ໃບຈຸດ ແນະນຳໃຫ້ໃຊ້ ຄໍໂລທາໂລນິດ (ຄາໂລນິດ) ຫຼື ໃຊ້ເດດຊິນ-MX (ສານຜະສົມເບໂນມິດ ກັບແມນ ໂຄເຊບ) 2-3 ບ່ວງ ປະສົມນ້ຳ 20 ລິດ ສີດພົ່ນທຸກໆ 7-15 ມື້ ຫາກພົບວ່າໂລກໃບຈຸດລົ້ງຢາໃຫ້ປ່ຽນໃຊ້ສານເຄມີ ຊະນິດອື່ນ.

- ຝັກເປັນບາດ ແລະ ເປັນຫູດ ຈາກຂີ້ກະເດືອນຝອຍ ແນະນຳໃຫ້ຊ້ 10 g (ອັດດິຄາບ) ຫຼື ຄາໂບຟູລານ (ຟູລາດານ 3g) ໂຮຍໃສ່ຂຸມ ຫຼື ຮອບຂຸມ ແລ້ວເອົາດິນຖົມ. ສານທັງສອງຊະນິດນີ້ ອາດເຮັດໃຫ້ໃບພືດໄໝ້ ແຕ່ ອາການດັ່ງກ່າວຈະຫາຍໄປເອງ.

10. ການປ້ອງກັນ ແລະ ກຳຈັດແມງໄມ້

ແມງໄມ້ ຫຼື ສັດຕູພືດທີ່ສຳຄັນ ແລະ ນຳຄວາມເສຍຫາຍຢ່າງຮ້າຍແຮງສຳລັບຖຍ່ວດິນ ໄດ້ແກ່: ສ້ຽນດິນ ແລະ ປວກ, ນີ້ແມ່ນໃຫ້ສີດພົ່ນລະຫວ່າງແຖວຖົ່ວດິນ ເວລາຖົ່ວດິນຢັ່ງຮາກ ແລະ ສີດພົ່ນອີກຄັ້ງ ຫຼັງຈາກນັ້ນ 2 ອາທິດຂ້າແມງໄມ້ດ້ວຍຢາຄໍໄພລີຟອດ (ລອດແບນ 40EC) ຫຼື ອາດໃຊ້ຄາໂບຟານ(ຟູຣາດານ 3G) ຮວຍພ້ອມກັບປຸຍ ຂ້າງແຖວຖົ່ວດິນ ຫຼັງຈາກເສຍຫຍ້າຄັ້ງທີ່ 2 ຫຼື ເມື່ອອາຍຸໄດ້ 30-35 ມື້ຄວນແບ່ງໃສ່ສອງຄັ້ງຄື: ຄັ້ງທຳອິດເມື່ອອາຍຸ ໄດ້30-35 ມື້ ແລະ ຄັ້ງທີ່ສອງເມື່ອອາຍຸໄດ້ 60-65 ມື້.

11.ການເກັບກ່ຽວ

ໃນກໍລະນີທີ່ເກັບຖົ່ວດິນແຫ້ງທີ່ເມັດແກ່ຫຼາຍສີ ຂອງຝາເປືອກຝັງດ້ານໃນ ຈະປ່ຽນສີນ້ຳຕານ ແລະ ນ້ຳຕານດຳ ເປືອກຫຸ້ມເມັດປັນສີຕາມພັນ. ຊຸ້ມຖອນຕົ້ນຖົ່ວດິນ ຈາກຫຼາຍຈຸດໃນໜານເມື່ອພົບ ໝາກແກ່ 60-80% ກໍ່ເກັບກ່ຽວໄດ້. ຄວນຖອນ ແລະ ເດັດເອົາໝາກໃຫ້ສຳເລັດ ຫຼັງຈາກເກັບເອົາ ໝາກຖົ່ວດິນແລ້ວ ໃຫ້ຮີບຟ້າວຕາກແດດໃຫ້ແຫ້ງ ແລ້ວນຳໄປໄວ້ບ່ອນທີ່ໂລ່ງ ແລະ ອາກາດທ່າຍເທໄດ້ ໂດຍຖອກຝັກໃສ່ເທິງຜ້າຢາງໜາເຂ່ຍໝາກຖົ່ວດິນແຕ່ລະກອງໃຫ້ ບາງ, ຖ້າເກັບເອົາໝາກບໍ່ທັນໃນມື້ທີ່ ໃຫ້ລ່ຽງຕົ້ນທີ່ລົ້ກຂຶ້ນມາໄວ້ ເປັນແຖວທາງຍດ້າໝາກຂຶ້ນບໍ່ຄວນກອງຕົ້ນຖົ່ວດິນທີ່ ຍັງບໍ່ທັນເກັບເອົາໝາກໄວ້ບ່ອນດຽວ ເພາະຈະເຮັດໃຫ້ເກີດເຊື້ອລາທີ່ໝາກ ແລະ ໄດ້ເມັດທີ່ມີຄຸນນະພາບຕ່ຳ.

12.ການເກັບຮັກສາເມັດພັນ

ຫຼັງຈາກຄວາມຊຸ່ມຂອງເມັດຢູ່ໃນລະດັບ 7-8% ແລ້ວຄວນເກັບຮັກສາຖົ່ວດິນໄວ້ໃນສະໝາກ ແລະ ແກະເມັດ ກ່ອນ 1 ເດືອນ. ອາຍຸານເກັບຮັກສາໃນສະພາບບໍ່ມີການຄວບຄຸມອຸນຫະພູມ ແລະ ຄວາມຊຸ່ມຈະຂຶ້ນຢູ່ກັບຄຸນນະພາບ

ເບື້ອງຕົ້ນຂອງເມັດພັນ ຖ້າຄວາມງອກເລີ່ມຕົ້ນຂອງເມັດຫຼັງເກັບກ່ຽວ ຢູ່ໃນລະດັບຕົ້ນເປີເຊັນຄວາມງອກຂອງເມັດຊຸດນັ້ນ ຈະຫຼຸດລົງຢ່າງໄວວາ.